ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2766-ผ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 26 AUG 2025

ແຈ້ງການ

ຮຽນ: ທ່ານຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ເລື່ອງ: ແຈ້ງການ ກ່ຽວກັບ ການປ່ຽນແປງໂຄງຮ່າງການຈັດຕັ້ງໃໝ່ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງໂຄງຮ່າງການຈັດຕັ້ງ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ສະບັບ ເລກທີ 048/ຜ-ຟຟລ.ສພບ, ລົງວັນທີ 19/06/2025.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ຜ-ຟຟລ ໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງໃໝ່ ພາຍໃນບໍລິສັດ ເຊິ່ງປະກອບດ້ວຍ 04 ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ, 10 ຝ່າຍ ແລະ 29 ພະແນກການ, ລາຍລະອຽດໂຄງຮ່າງການຈັດຕັ້ງຄັດຕິດມາພ້ອມນີ້. ການປັບປຸງດັ່ງກ່າວ ແມ່ນ ເພື່ອຮັບປະກັນເຮັດໃຫ້ການຄຸ້ມຄອງບໍລິຫານເປັນໄປຢ່າງຕໍ່ເນື່ອງ ແລະ ສາມາດດຳເນີນທຸລະກິດໃຫ້ເປັນໄປຕາມແຜນທີ່ບໍລິສັດວາງໄວ້.

ດັ່ງນັ້ນ, ຜ-ຟຟລ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la